ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນະຄອນຫຼວງວຽງຈັນ

ເລກທີ 977 /ຈນວ

ວັນທີ 11. 10. 2024

# ຂໍ້ຕົກລົງ

## ວ່າດ້ວຍການກຳນົດລາຄາຫົວໜ່ວຍທົດແທນ ຕໍ່ຊັບສິນທີ່ໄດ້ຮັບຜົນກະທົບ ຈາກໂຄງການປັບປຸງ ແລະ ສ້ອມແປງທາງຫຼວງແຫ່ງຊາດ ເລກທີ 13 ໃຕ້ (ກມ 21 ຫາ ກມ 71) ເຂດບ້ານໂຄກສີວິໄລ ເມືອງໄຊທານີ ຫາ ບ້ານສົມສະຫວາດ ເມືອງປາກງື່ມ ນະຄອນຫຼວງວຽງຈັນ (ກມ 21 ຫາ ກມ 66)

- ອີງຕາມ ກົດໝາຍ ວ່າດ້ວຍການປົກຄອງທ້ອງຖິ່ນ ໝວດທີ IV ມາດຕາ 19, 20 ວ່າດ້ວຍພາລະບົດບາດ, ສິດ ແລະ ໜ້າທີ່ຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ. ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015;
- ອີງຕາມ ກົດໝາຍ ວ່າດ້ວຍທາງຫຼວງແຫ່ງຊາດ ສະບັບເລກທີ 03/ສພຊ, ລົງວັນທີ 08 ພະຈິກ 2016;
- ອີງຕາມ ກົດໝາຍ ວ່າດ້ວຍທີ່ດິນ ມາດຕາ 109, 153 ແລະ 154 ສະບັບເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019;
- ອີງຕາມ ຜົນຂອງກອງປະຊຸມ ຄະນະປະຈຳ ສະພາປະຊາຊົນ ນະຄອນຫຼວງວຽງຈັນ ໃນການພິຈາລະນາຮັບຮອງເອົາການປັບປຸງເນື້ອໃນຂອງນິຕິກຳ ຕາມຜົນຂອງກອງປະຊຸມ ສະໄໝສາມັນ ເທື່ອທີ 7 ຂອງສະພາປະຊາຊົນ ນະຄອນຫຼວງວຽງຈັນ ຊຸດທີ II ຄັ້ງວັນທີ 10 ກັນຍາ 2024.

## ເຈົ້າຄອງນະຄອນຫຼວງວຽງຈັນ ຕົກລົງ:

### ໝວດທີ 1
### ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການປະຕິບັດນະໂຍບາຍ ແລະ ລາຄາຫົວໜ່ວຍທົດແທນຕໍ່ຊັບສິນທີ່ໄດ້ຮັບຜົນກະທົບຈາກໂຄງການປັບປຸງ ແລະ ສ້ອມແປງທາງຫຼວງແຫ່ງຊາດ ເລກທີ 13 ໃຕ້ ຂອງນະຄອນຫຼວງວຽງຈັນ, ເພື່ອໃຫ້ສອດຄ່ອງກັບການພັດທະນາເສດຖະກິດ-ສັງຄົມ ແນ່ໃສ່ປົກປ້ອງ ສິດ ແລະ ຜົນປະໂຫຍດອັນຊອບທຳຂອງປະຊາຊົນ, ຮັບປະກັນຄວາມສະເໝີພາບ, ໂປ່ງໃສ, ຍຸຕິທຳ ແລະ ສາມາດ ກວດສອບໄດ້ ປະກອບສ່ວນເຂົ້າໃນການສ້າງສາພັດທະນາ ຕາມແຜນຍຸດທະສາດຂອງ ນະຄອນຫຼວງວຽງຈັນ ໃນ ແຕ່ລະໄລຍະ.

**ມາດຕາ 2 ນິຍາມ**

ຫົວໜ່ວຍລາຄາທົດແທນ ແມ່ນການກຳນົດລາຄາການຄິດໄລ່ທົດແທນຄ່າເສຍຫາຍ ປະເພດທີ່ດິນປຸກສ້າງ, ພືດລະປູກ ແລະ ຄ່າເສຍໂອກາດ ທີ່ໄດ້ຮັບຜົນກະທົບ ເພື່ອນຳໄປຄິດໄລ່ມູນຄ່າທົດແທນຄ່າເສຍຫາຍ ໃຫ້ແກ່ຜູ້ທີ່ໄດ້ຮັບຜົນກະທົບຈາກ ໂຄງການປັບປຸງ ແລະ ສ້ອມແປງທາງຫຼວງແຫ່ງຊາດ ເລກທີ 13 ໃຕ້ (ກມ 21 ຫາ ກມ 71) ເຂດບ້ານໂຄກສີວິໄລ ເມືອງໄຊທານີ ຫາ ບ້ານສົມສະຫວາດ ເມືອງປາກງື່ມ ນະຄອນຫຼວງວຽງຈັນ (ກມ 21 ຫາ ກມ 66).

ມາດຕາ 3 ອະທິບາຍຄຳສັບ

ຄຳສັບທີ່ໃຊ້ໃນຂໍ້ຕົກລົງສະບັບນີ້ມີຄວາມໝາຍ ດັ່ງນີ້:

1. ການທົດແທນຄ່າເສຍຫາຍ ໝາຍເຖິງ ການທົດແທນເປັນເງິນ ຫຼື ວັດຖຸ ສຳລັບທີ່ດິນ, ສິ່ງປຸກສ້າງ ແລະ ພືນລະປູກ ທີ່ໄດ້ຮັບຜົນກະທົບຈາກໂຄງການ ດ້ວຍມູນຄ່າປ່ຽນແທນ;
2. ຜູ້ໄດ້ຮັບຜົນກະທົບ ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ຮັບຜົນກະທົບ ຈາກໂຄງການປັບປຸງ ແລະ ສ້ອມແປງທາງຫຼວງແຫ່ງຊາດ ເລກທີ 13 ໃຕ້ (ກມ 21 ຫາ ກມ 71) ເຂດບ້ານໂຄກສີວິໄລ ເມືອງໄຊທານີ ຫາ ບ້ານສົມສະຫວາດ ເມືອງປາກງື່ມ ນະຄອນຫຼວງວຽງຈັນ (ກມ 21 ຫາ ກມ 66);
3. ລາຄາຫົວໜ່ວຍ ໝາຍເຖິງ ມູນຄ່າທີ່ໄດ້ກຳນົດໄວ້ ສຳລັບການຄິດໄລ່ການທົດແທນຄ່າເສຍຫາຍ ປະເພດທີ່ດິນ, ສິ່ງປຸກສ້າງ ແລະ ພືນລະປູກທີ່ໄດ້ຮັບຜົນກະທົບຈາກໂຄງການ;
4. ຊັບສິນ ໝາຍເຖິງ ທີ່ດິນ, ສິ່ງປຸກສ້າງ, ພືນລະປູກ ແລະ ອື່ນໆ ຂອງຜູ້ໄດ້ຮັບຜົນກະທົບ;
5. ສິດນຳໃຊ້ທີ່ດິນ ໝາຍເຖິງ ສິດນຳໃຊ້ທີ່ດິນຂອງພົນລະເມືອງລາວ ທີ່ຄຸ້ມຄອງຢ່າງຖືກຕ້ອງຕາມກົດໝາຍ;
6. ສິ່ງປຸກສ້າງ ໝາຍເຖິງ ຜະລິດຕະພັນຂອງວຽກງານກໍ່ສ້າງ ເຊັ່ນ: ອາຄານ, ກຳແພງ, ຮົ້ວໜາມໜາກຈັບ ແລະ ອົງປະກອບທີ່ເປັນລະບົບໂຄງລ່າງພື້ນຖານທາງດ້ານເຕັກນິກ;
7. ພືນລະປູກ ໝາຍເຖິງ ຕົ້ນໄມ້ອຸດສາຫະກຳ, ຕົ້ນໄມ້ໃຫ້ໝາກ, ປະເພດໄມ້ປ່ອງ, ພືດຄສອນ, ພືດອາຫານສັດ ແລະ ເຂົ້າ;
8. ການຊ່ວຍເຫຼືອໃນໄລຍະຂ້າມຜ່ານຕໍ່ຜູ້ທີ່ໄດ້ຮັບຜົນກະທົບ ໝາຍເຖິງ ການຊ່ວຍເຫຼືອຈາກເຈົ້າຂອງໂຄງການໃຫ້ແກ່ຜູ້ທີ່ໄດ້ຮັບຜົນກະທົບ ເຮືອນ, ຮ້ານຄ້າ ແລະ ຮ້ານບໍລິການ ໃນໄລຍະການປັບປຸງກໍ່ສ້າງ ເຮືອນ ຫຼື ຮ້ານຄ້າ, ຮ້ານບໍລິການຄືນໃໝ່ ຊຶ່ງບໍ່ສາມາດດຳເນີນທຸລະກິດໄດ້;
9. ການຊ່ວຍເຫຼືອພິເສດ ໝາຍເຖິງ ການຊ່ວຍເຫຼືອເປັນວັດຖຸ ຫຼື ເປັນເງິນ ໃຫ້ແກ່ຜູ້ທີ່ໄດ້ຮັບຜົນກະທົບທີ່ຈັດຢູ່ໃນປະເພດ ຄອບຄົວດ້ອຍໂອກາດ, ທຸກຍາກ, ອານາຖາ ຫຼື ຄອບຄົວທີ່ຖືກຍົກຍ້າຍເຮືອນ, ຮ້ານຄ້າ ແລະ ຮ້ານບໍລິການໝົດຫຼັງ;
10. ການສູນເສຍລາຍໄດ້ ໝາຍເຖິງ ການສູນເສຍລາຍໄດ້ ຈາກການປິດກິດຈະການໃນໄລຍະການກໍ່ສ້າງໂຄງການ;
11. ລະບົບສາທາລະນູປະໂພກ ໝາຍເຖິງ ການສະໜອງສິ່ງອຳນວຍຄວາມສະດວກ ທາງດ້ານບໍລິການສາທາລະນະທີ່ຈຳເປັນ ເຊັ່ນ: ໄຟຟ້າ, ນ້ຳປະປາ, ໂທລະສັບ, ສາຍສົ່ງແຫ່ງຊາດ (ສາຍໄຍແກ້ວ) ແລະ ອື່ນໆ.

ມາດຕາ 4 ນະໂຍບາຍຂອງລັດ

ລັດ ສົ່ງເສີມ ແລະ ອຳນວຍຄວາມສະດວກ ແກ່ຜູ້ໃຫ້ທຶນໃນການພັດທະນາເສັ້ນທາງເລກທີ 13 ໃຕ້ ເພື່ອໄປຕາມຈຸດປະສົງຂອງໂຄງການ;

ລັດ ຊຸກຍູ້ໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ອຳນວຍຄວາມສະດວກໃຫ້ແກ່ຜູ້ໃຫ້ທຶນ ແລະ ຜູ້ຮັບເໝົາກໍ່ສ້າງໃຫ້ໄດ້ຈັດຕັ້ງປະຕິບັດຕາມແຜນການ;

ລັດ ປົກປ້ອງສິດ, ຜົນປະໂຫຍດອັນຊອບທຳຂອງປະຊາຊົນ, ນິຕິບຸກຄົນ ແລະ ຜູ້ໃຫ້ທຶນພັດທະນາ ໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ.

ມາດຕາ 5 ຫຼັກການພື້ນຖານໃນການຈັດຕັ້ງປະຕິບັດ

ໂຄງການປັບປຸງ ແລະ ສ້ອມແປງທາງຫຼວງແຫ່ງຊາດ ເລກທີ 13 ໃຕ້ (ກມ 21 ຫາ ກມ 71) ປະຕິບັດຕາມຫຼັກການພື້ນຖານ ດັ່ງນີ້:

1. ຮັບປະກັນຄວາມຖືກຕ້ອງ ແລະ ສອດຄ່ອງຕາມນະໂຍບາຍຂອງລັດ ແລະ ແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ;

2. ມີການປະສານສົມທົບ, ປຶກສາຫາລື, ເຂົ້າຮ່ວມລະຫວ່າງພາກລັດ, ຜູ້ໃຫ້ທຶນພັດທະນາ ແລະ ຜູ້ທີ່ໄດ້ຮັບຜົນກະທົບ;
3. ຮັບປະກັນໃຫ້ມີຜົນປະໂຫຍດຕໍ່ລັດ, ລວມໝູ່, ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ;
4. ຮັບປະກັນຄວາມສະເໝີພາບ, ຖືກຕ້ອງ, ໂປ່ງໃສ, ເປີດເຜີຍ, ຍຸຕິທຳ ແລະ ສາມາດກວດສອບໄດ້.

**ມາດຕາ 6 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສະເພາະການທົດແທນຊັບສິນຂອງປະຊາຊົນທີ່ນອນຢູ່ໃນໂຄງການປັບປຸງ ແລະ ສ້ອມແປງ ເສັ້ນທາງ ຫຼວງແຫ່ງຊາດເລກທີ 13ໃຕ້ ຊ່ວງ ກມ 21 ຫາ ກມ 66 ຊຶ່ງກວມເອົາ 2 ເມືອງ ແລະ ປະກອບມີ 19 ບ້ານ ຄື: ເມືອງໄຊທານີ ປະກອບມີ: ❶ ບ້ານໂຄກສີວິໄລ, ❷ ບ້ານໂນນທອງ, ❸ ບ້ານໄຜ່ລ້ອມ, ❹ ບ້ານສົມສະຫວັນ, ❺ ບ້ານໂຄກສະຫວ່າງ, ❻ ບ້ານໂພນສະຫວ່າງ, ❼ ບ້ານນາຜາສຸກ, ❽ ບ້ານດົງຄວາຍ ແລະ ❾ ບ້ານບໍ່ເຫຼັກ; ເມືອງປາກງື່ມ ປະກອບມີ: ❶ ບ້ານໜອງບົວທອງ, ❷ ບ້ານສ້າງໃສ, ❸ ບ້ານໂຄກສາ, ❹ ບ້ານທາງໂຄ້ງ, ❺ ບ້ານດອນໄຮ່, ❻ ບ້ານນາຊອນ, ❼ ບ້ານພ້າວ, ❽ ບ້ານສົມປະເສີດ, ❾ ບ້ານໄຮ່ ແລະ ❿ ບ້ານສົມສະຫວາດ.

## ໝວດທີ 2
## ນະໂຍບາຍ ແລະ ເງື່ອນໄຂ ການທົດແທນຄ່າເສຍຫາຍ

**ມາດຕາ 7 ນະໂຍບາຍການທົດແທນຄ່າເສຍຫາຍ**

ຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການ ຈະໄດ້ຮັບນະໂຍບາຍການທົດແທນຄ່າເສຍຫາຍ ດັ່ງນີ້:

1. ຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການ ກ່ຽວກັບສິດນຳໃຊ້ເນື້ອທີ່ດິນຖືກຕ້ອງຕາມກົດໝາຍ (ທີ່ມີໃບຕາດິນຂອບທອງ) ແລະ ຜູ້ທີ່ມີໃບສິດນຳໃຊ້ທີ່ດິນ (ໃບນຳໃຊ້ທີ່ດິນ) ທີ່ບໍ່ແມ່ນດິນລັດ ຊຶ່ງສູນເສຍເນື້ອທີ່ດິນ ທັງໝົດ ຫຼື 80% ຂຶ້ນໄປ, ສ່ວນເນື້ອທີ່ດິນທີ່ຍັງເຫຼືອ ຊຶ່ງບໍ່ສາມາດນຳໃຊ້ໄດ້ອີກ ເຈົ້າຂອງໂຄງການຕ້ອງໄດ້ທົດແທນຄ່າເສຍຫາຍທັງໝົດ;
2. ຜູ້ທີ່ໄດ້ຮັບຜົນກະທົບ ກ່ຽວກັບສິດນຳໃຊ້ເນື້ອທີ່ດິນຖືກຕ້ອງຕາມກົດໝາຍ (ທີ່ມີໃບຕາດິນຂອບທອງ) ແລະ ຜູ້ທີ່ມີໃບສິດນຳໃຊ້ທີ່ດິນ (ໃບນຳໃຊ້ທີ່ດິນ) ທີ່ບໍ່ແມ່ນດິນລັດ ຫາກໄດ້ສູນເສຍເນື້ອທີ່ດິນສ່ວນໃດສ່ວນໜຶ່ງ, ສ່ວນເນື້ອທີ່ດິນທີ່ຍັງເຫຼືອສາມາດນຳໃຊ້ໄດ້ ເຈົ້າຂອງໂຄງການຕ້ອງໄດ້ທົດແທນຄ່າເສຍຫາຍ ໃນສ່ວນທີ່ໄດ້ສູນເສຍນັ້ນ ດ້ວຍມູນຄ່າເປັນເງິນທີ່ຄິດໄລ່ໄວ້. ສ່ວນເນື້ອທີ່ດິນທີ່ຍັງເຫຼືອ ຊຶ່ງສາມາດນຳໃຊ້ໄດ້ ຜູ້ທີ່ໄດ້ຮັບຜົນກະທົບຕ້ອງໄດ້ຮັບເອກະສານຢັ້ງຢືນ ກ່ຽວກັບສິດນຳໃຊ້ເນື້ອທີ່ດິນຕອນນັ້ນຄືນໃໝ່ ຈາກພາກສ່ວນກ່ຽວຂ້ອງຢ່າງຄົບຖ້ວນ ແລະ ຖືກຕ້ອງຕາມລະບຽບການ ໂດຍເຈົ້າຂອງໂຄງການຕ້ອງຮັບຜິດຊອບຄ່າໃຊ້ຈ່າຍທີ່ເກີດຂຶ້ນ ຈາກການປ່ຽນແປງສິດນຳໃຊ້ເນື້ອທີ່ດິນທັງໝົດ;
3. ຜູ້ທີ່ສູນເສຍສິ່ງປຸກສ້າງທັງໝົດ ຫຼື ບາງສ່ວນ ເຈົ້າຂອງໂຄງການ ຕ້ອງໄດ້ທົດແທນຄ່າເສຍຫາຍດ້ວຍມູນຄ່າປ່ຽນແທນເປັນເງິນທີ່ຄິດໄລ່ໄວ້ຂອງສິ່ງປຸກສ້າງດັ່ງກ່າວ ໃຫ້ແກ່ຜູ້ທີ່ໄດ້ຮັບຜົນກະທົບທີ່ເປັນເຈົ້າຂອງກຳມະສິດຂອງສິ່ງປຸກສ້າງນັ້ນ ໂດຍບໍ່ມີການຫັກຄ່າຫຼຸ້ຍຫ້ຽນ ຫຼື ບໍ່ມີການຫຼຸດຄ່າທົດແທນສຳລັບວັດຖຸທີ່ຍັງເຫຼືອ;
4. ການທົດແທນຄ່າເສຍຫາຍ ໃຫ້ແກ່ຜູ້ໄດ້ຮັບຜົນກະທົບໃນທຸກໆກໍລະນີ ເຈົ້າຂອງໂຄງການ ຕ້ອງໄດ້ປະສານສົມທົບກັບຄະນະຮັບຜິດຊອບການທົດແທນຄ່າເສຍຫາຍຂັ້ນແຂວງ ເພື່ອຕິດຕາມກວດກາ, ຢັ້ງຢືນຄວາມຖືກຕ້ອງ ແລະ ຄົບຖ້ວນ ຕາມແຜນທົດແທນຄ່າເສຍຫາຍ;
5. ຊັບສິນທີ່ມີຂໍ້ຂັດແຍ່ງກັບບຸກຄົນອື່ນ ຫຼື ອົງການຈັດຕັ້ງໃດໜຶ່ງ ຕ້ອງໄດ້ສ້າງບົດບັນທຶກຕົວເລກຜົນກະທົບຄ່າເສຍຫາຍໄວ້, ພາຍຫຼັງທີ່ສຳເລັດການແກ້ໄຂຂໍ້ຂັດແຍ່ງແລ້ວ ຈຶ່ງໃຫ້ສະເໜີຂໍການທົດແທນ;
6. ການຊ່ວຍເຫຼືອພິເສດ ແມ່ນການຊ່ວຍຄອບຄົວທີ່ມີເງື່ອນໄຂຄົບຖ້ວນ ຈຶ່ງຈະໄດ້ຮັບການຊ່ວຍເຫຼືອພິເສດໃນຮູບແບບເປັນເງິນຕາມເງື່ອນໄຂ ຄື:

(1) ເປັນຄອບຄົວທີ່ຖືກຍົກຍ້າຍເຮືອນ, ຊຶ່ງຈະມີການຊ່ວຍເຫຼືອໃນອັດຕາ 420,000 ກີບ/ເດືອນ/ຄົນ ຕາມໄລຍະເວລາຈົນສາມາດປຸກເຮືອນໃໝ່ສຳເລັດ ຊຶ່ງບໍ່ເກີນ 3 ເດືອນ;

(2) ເປັນຄອບຄົວຜູ້ດ້ອຍໂອກາດ, ຊຶ່ງຈະມີການຊ່ວຍເຫຼືອໃນອັດຕາ 420,000 ກີບ/ເດືອນ/ຄົນ ຕາມໄລຍະເວລາຕົວຈິງຂອງການກໍ່ສ້າງ ແລະ ສ້ອມແປງເສັ້ນທາງ ໃນເຂດທີ່ໄດ້ຮັບຜົນກະທົບຂອງຄອບຄົວຜູ້ດ້ອຍໂອກາດດັ່ງກ່າວ ແຕ່ບໍ່ເກີນ 3 ເດືອນ;

(3) ເປັນຄອບຄົວທີ່ຍົກຍ້າຍຮ້ານຄ້າ ແລະ ຮ້ານບໍລິການຕ່າງໆ, ຊຶ່ງຈະມີການຊ່ວຍເຫຼືອໃນອັດຕາ 420,000 ກີບ/ເດືອນ/ຄົນ ຕາມໄລຍະເວລາການຍ້າຍຮ້ານຕົວຈິງ ເພື່ອການກໍ່ສ້າງ ແລະ ສ້ອມແປງເສັ້ນທາງ ບໍ່ເກີນ 3 ເດືອນ;

7. ຮ້ານຄ້າ ແລະ ຮ້ານບໍລິການ ຈະໄດ້ຮັບການທົດແທນຄ່າເສຍໂອກາດລາຍໄດ້ ໃນຊ່ວງໄລຍະດຳເນີນການກໍ່ສ້າງໂຄງການທີ່ບໍ່ສາມາດເປີດໃຫ້ບໍລິການໄດ້ ຊຶ່ງຈະມີການຄິດໄລ່ຕາມໄລຍະເວລາການປິດຮ້ານຕົວຈິງ (ຕາມການປຶກສາຫາລື ແລະ ເຮັດບົດບັນທຶກກັບຜູ້ໄດ້ຮັບຜົນກະທົບຕົວຈິງ), ໂດຍຈະເອົາມູນຄ່າກຳໄລທີ່ຄິດໄລ່ ຈາກການມອບຈ່າຍອາກອນ (ປະມານ 3% ຕາມປະເພດຂອງທຸລະກິດ ແລະ ບໍລິການ) ທີ່ເປັນລາຍເດືອນ ອອກມາເປັນຄ່າສະເລ່ຍເປັນວັນ ມາຄູນໃຫ້ໄລຍະທີ່ເສຍໂອກາດ (ມື້) ການສ້າງລາຍໄດ້ມາເປັນພື້ນຖານໃນການຄິດໄລ່ ການທົດແທນຄ່າເສຍໂອກາດລາຍໄດ້ ໃນຊ່ວງໄລຍະທີ່ບໍ່ສາມາດດຳເນີນທຸລະກິດໄດ້;

8. ທໍ່ລະບາຍນ້ຳ ທີ່ໄດ້ຮັບຜົນກະທົບຈະບໍ່ມີການທົດແທນຄືນ ແຕ່ທາງໂຄງການຈະຊ່ວຍເຫຼືອໃນການຕິດຕັ້ງທໍ່ຄືນໃໝ່ ຊຶ່ງທໍ່ດັ່ງກ່າວຈະຕ້ອງເປັນຂອງປະຊາຊົນຊື້ມາເອງ ແລະ ຂະໜາດຕາມຄວາມເໝາະສົມດ້ານວິຊາການ ແລະ ການລະບາຍນ້ຳຕົວຈິງ (ຂະໜາດທໍ່ ø 60 - ø 80);

9. ລານເບຕົງ ຫຼື ແຜ່ນພື້ນເບຕົງທາງເຂົ້າ ແມ່ນຈະບໍ່ໄດ້ຮັບການຊົດເຊີຍ ເນື່ອງຈາກນອນຢູ່ໃນວຽກການກໍ່ສ້າງ;

10. ທາງຊອຍ (ທາງເຂົ້າບ້ານ) ແລະ ທາງເຂົ້າວັດ ມີລະດັບທີ່ຕ່ຳກວ່າທາງທີ່ກໍ່ສ້າງໃໝ່ ແລະ ບໍ່ສາມາດ ເຂົ້າ-ອອກໄດ້ສະດວກຄືເກົ່າ ໂຄງການຕ້ອງໄດ້ປັບລະດັບຄວາມສູງຂອງທາງນັ້ນໃຫ້ພຽງທາງໃໝ່ ເພື່ອໃຫ້ສາມາດທຽວໄດ້ເປັນປົກກະຕິຄືເກົ່າ;

11. ຕົ້ນໄມ້, ດອກໄມ້ ຫຼື ຕົ້ນໄມ້ປະດັບ ທີ່ນອນໃນເຂດສະຫງວນຂອງທາງຫຼວງແຫ່ງຊາດ ແມ່ນຈະບໍ່ໄດ້ຮັບການທົດແທນ;

12. ປ້າຍໂຄສະນາທີ່ໄດ້ຮັບອະນຸຍາດ ຫຼື ບໍ່ໄດ້ຮັບອະນຸຍາດຈາກພາກລັດ ເຈົ້າຂອງປ້າຍຕ້ອງຍົກຍ້າຍອອກດ້ວຍຕົນເອງ ໂດຍບໍ່ມີການທົດແທນໃດໆຈາກໂຄງການ.

**ມາດຕາ 8 ເງື່ອນໄຂການຂຶ້ນບັນຊີຊັບສິນຕໍ່ຜູ້ໄດ້ຮັບຜົນກະທົບ**

ການຂຶ້ນບັນຊີຊັບສິນຕໍ່ຜູ້ໄດ້ຮັບຜົນກະທົບ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ຊັບສິນທີ່ນອນຢູ່ໃນແລວທາງຂອງໂຄງການກຳນົດໄວ້;
2. ເນື້ອທີ່ດິນທີ່ມີເອກະສານຢັ້ງຢືນສິດນຳໃຊ້ເນື້ອທີ່ດິນ ຖືກຕ້ອງຕາມກົດໝາຍ;
3. ສຳລັບສິ່ງປຸກສ້າງ ຕ້ອງແມ່ນສິ່ງປຸກສ້າງທີ່ສາມາດນຳໃຊ້ໄດ້.

**ມາດຕາ 9 ເງື່ອນໄຂການທົດແທນຕໍ່ຊັບສິນຜູ້ໄດ້ຮັບຜົນກະທົບ**

ການທົດແທນຕໍ່ຊັບສິນຜູ້ໄດ້ຮັບຜົນກະທົບ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ຊັບສິນທີ່ມີກ່ອນວັນປະກາດເລີ່ມຕົ້ນດຳເນີນໂຄງການ;
2. ຊັບສິນທີ່ໄດ້ຮັບການຂຶ້ນບັນຊີ;
3. ຊັບສິນໄດ້ມີການຮັບຮອງຈາກຄະນະກຳມະການທີ່ກ່ຽວຂ້ອງ .

ສຳລັບຊັບສິນ ທີ່ເກີດຂຶ້ນພາຍຫຼັງວັນປະກາດເລີ່ມຕົ້ນດຳເນີນໂຄງການ ຫຼື ບໍ່ຜ່ານການຮັບຮອງຈາກຄະນະກຳມະການ ຈະບໍ່ໄດ້ການທົດແທນ.

**ມາດຕາ 10 ເງື່ອນໄຂໄດ້ຮັບການທົດແທນຄ່າເສຍຫາຍ**

ເງື່ອນໄຂໄດ້ຮັບການທົດແທນຄ່າເສຍຫາຍ ມີດັ່ງນີ້:

1. ຜ່ານການຕີລາຄາຄິດໄລ່ ຂອງຄະນະກຳມະການແກ້ໄຂຂໍ້ຂັດແຍ່ງ, ຍົກຍ້າຍສິ່ງກີດຂວາງ ແລະ ຄົ້ນຄວ້າຮ່າງນະໂຍບາຍ, ລາຄາຫົວໜ່ວຍທົດແທນຜົນກະທົບຈາກໂຄງການນີ້ຮ່ວມກັບເຈົ້າຂອງກຳມະສິດ ຜູ້ໄດ້ຮັບຜົນກະທົບ;
2. ຜ່ານການຮັບຮອງຈາກຄະນະກຳມະການແກ້ໄຂຂໍ້ຂັດແຍ່ງ, ຍົກຍ້າຍສິ່ງກີດຂວາງ ແລະ ຄົ້ນຄວ້າຮ່າງນະໂຍບາຍ, ລາຄາຫົວໜ່ວຍທົດແທນຜົນກະທົບຈາກໂຄງການ;
3. ຜູ້ທີ່ໄດ້ຮັບຜົນກະທົບ ຈະຕ້ອງມີບັນຊີຝາກທະນາຄານ (ຖ້າຄອບຄົວໃດບໍ່ມີບັນຊີ ທາງໂຄງການຈະຊ່ວຍເປີດບັນຊີໃຫ້ ໂດຍບໍ່ເສຍຄ່າບໍລິການເປີດ, ສຳລັບເງິນຝາກບັນຊີ 50,000 ກີບ ແມ່ນຜູ້ທີ່ໄດ້ຜົນກະທົບເປັນຜູ້ຮັບຜິດຊອບເອງ).

**ມາດຕາ 11 ປະເພດຂອງຜູ້ໄດ້ຮັບຜົນກະທົບ**

ຜູ້ໄດ້ຮັບຜົນກະທົບຈາກໂຄງການ ແມ່ນບຸກຄົນ, ນິຕິບຸກຄົນ, ຊຸມຊົນ, ຊັບສິນຂອງລັດ ທີ່ໄດ້ຮັບຜົນກະທົບຈາກກິດຈະກຳຂອງໂຄງການ ຊຶ່ງມີລະດັບທີ່ແຕກຕ່າງກັນ ດັ່ງນີ້:

1. ປະເພດທີ 1 ຜູ້ຖືກຈັດສັນຍົກຍ້າຍ ຖືວ່າຈັດຢູ່ໃນປະເພດຜົນກະທົບລະດັບສູງ ແມ່ນຜູ້ທີ່ໄດ້ຮັບຜົນກະທົບທີ່ຢູ່ອາໄສ ຊຶ່ງເນື້ອທີ່ຍັງເຫຼືອ ແມ່ນບໍ່ພຽງພໍໃນການຢູ່ອາໄສຕໍ່ໄປໄດ້ ຈຳເປັນຕ້ອງຍົກຍ້າຍອອກ;
2. ປະເພດທີ 2 ຜູ້ໄດ້ຮັບຜົນກະທົບລະດັບປານກາງ ແມ່ນຜູ້ທີ່ໄດ້ຮັບຜົນກະທົບຕໍ່ຊັບສິນ ເທົ່າກັບ ຫຼື ຫຼາຍກວ່າ 10% ຂຶ້ນໄປ ຂອງຈຳນວນຊັບສິນທັງໝົດທີ່ຄຸ້ມຄອງ;
3. ປະເພດທີ 3 ຜູ້ຖືກກະທົບປະເພດເບົາ ແມ່ນຜູ້ໄດ້ຮັບຜົນກະທົບເບົາບາງ, ຜູ້ໄດ້ຮັບຜົນກະທົບຕໍ່ຊັບສິນ 10% ລົງມາ ຂອງຈຳນວນຊັບສິນທັງໝົດທີ່ຄຸ້ມຄອງ;
4. ປະເພດທີ 4 ຄອບຄົວດ້ອຍໂອກາດ ແມ່ນຄອບຄົວທີ່ໄດ້ຮັບຜົນກະທົບຈາກໂຄງການ ເປັນຄອບຄົວທີ່ມີຄວາມສ່ຽງທີ່ຈະທຸກຍາກຕື່ມ ອັນເນື່ອງມາຈາກບັນຫາການປ່ຽນແປງທາງດ້ານສະພາບແວດລ້ອມ ແລະ ການປັບຕົວຕໍ່ຜົນກະທົບ, ຄອບຄົວດ້ອຍໂອກາດ ຕ້ອງນອນໃນ 4 ເງື່ອນໄຂດັ່ງຕໍ່ໄປນີ້:
   - ຄອບຄົວດ້ອຍໂອກາດ ຊຶ່ງມີລາຍຮັບໜ້ອຍກວ່າເສັ້ນລະດັບຄວາມທຸກຍາກແຫ່ງຊາດ ກຳນົດໄວ້;
   - ຜູ້ຍິງເປັນຫົວໜ້າຄອບຄົວ ລ້ຽງລູກຫຼາຍຄົນຕາມລຳພັງ, ໂດຍໃຊ້ຊີວິດຢູ່ຄົນດຽວ ຫຼື ຢູ່ກັບຜູ້ພິການທາງຮ່າງກາຍ ແລະ ເສຍຈິດ ໂດຍບໍ່ສາມາດຊ່ວຍເຫຼືອຕົນເອງໄດ້ ຫຼື ບໍ່ສາມາດອອກແຮງງານໄດ້ ແລະ ມີລາຍຮັບໜ້ອຍກວ່າເສັ້ນລະດັບຄວາມທຸກຍາກແຫ່ງຊາດ ກຳນົດໄວ້;
   - ຄອບຄົວ ຜູ້ທີ່ມີອາຍຸເກີນ 60 ປີຂຶ້ນໄປ ທີ່ບໍ່ມີຄົນດູແລ;
   - ຄອບຄົວຄົນພິການ ຊຶ່ງມີຫົວໜ້າຄອບຄົວເປັນຄົນພິການທາງຮ່າງກາຍ ແລະ ມີສະມາຊິກຄອບຄົວເປັນຄົນພິການທາງຮ່າງກາຍ, ເປັນບ້າເສຍຈິດ ບໍ່ສາມາດຊ່ວຍເຫຼືອຕົນເອງ ຫຼື ບໍ່ສາມາດອອກແຮງງານໄດ້ໂດຍນອນຢູ່ໃນເງື່ອນໄຂ ປະຕິບັດນະໂຍບາຍຊົດເຊີຍພິເສດຂອງໂຄງການ.

**ມາດຕາ 12 ງົບປະມານໃນການທົດແທນຄ່າເສຍຫາຍ**

ການທົດແທນຄ່າເສຍຫາຍຕໍ່ຜູ້ໄດ້ຮັບຜົນກະທົບຈາກໂຄງການ ແມ່ນນຳໃຊ້ງົບປະມານຂອງລັດຖະບານ (ງົບປະມານກອງທຶນທາງ) ໂດຍຄິດໄລ່ດ້ວຍມູນຄ່າປ່ຽນແທນເປັນເງິນກີບ ດ້ວຍການໂອນເຂົ້າບັນຊີ ຂອງຜູ້ທີ່ໄດ້ຮັບຜົນກະທົບ, ການທົດແທນຕ້ອງໄດ້ຊຳລະໃຫ້ສຳເລັດ ກ່ອນວັນເລີ່ມຕົ້ນການກໍ່ສ້າງ.

## ໝວດທີ 3
## ຫຼັກການກຳນົດລາຄາທົດແທນ ແລະ ວິທີການຄິດໄລ່ລາຄາທົດແທນ

### ມາດຕາ 13 ຫຼັກການກຳນົດລາຄາທົດແທນ

ຫຼັກການກຳນົດລາຄາທົດແທນ ມີດັ່ງນີ້:

**1. ຫຼັກການຄິດໄລ່ລາຄາທົດແທນທີ່ດິນ**

ການຄິດໄລ່ລາຄາທົດແທນສົດນຳໃຊ້ທີ່ດິນ ແມ່ນການເອົາລາຄາຢູ່ເຂດປະເມີນມູນຄ່າທີ່ດິນຕາມຂໍ້ຕົກລົງ ສະບັບເລກທີ 142/ຈນວ, ລົງວັນທີ 26 ກຸມພາ 2021 ວ່າດ້ວຍການປະເມີນລາຄາທີ່ດິນທົ່ວນະຄອນຫຼວງວຽງຈັນ ບວກກັບ ລາຄາຊື້-ຂາຍ ໃນທ້ອງຖິ່ນຢູ່ແຕ່ລະເຂດບ້ານ ໃນໄລຍະລົງເກັບກຳຂໍ້ມູນໃນເດືອນມັງກອນ ຫາ ເດືອນກຸມພາ ມາຫານສອງເປັນລາຄາທົດແທນ, ພ້ອມດຽວກັນນັ້ນ ກໍໄດ້ມີການພິຈາລະນາເອົາເງື່ອນໄຂຂອງສະພາບອັດຕາເງິນເຟີ້ເຂົ້າຕື່ມອີກ.

**2. ຫຼັກການຄິດໄລ່ລາຄາທົດແທນສິ່ງປູກສ້າງ**

ການຄິດໄລ່ລາຄາທົດແທນສິ່ງປູກສ້າງ ແມ່ນການປະເມີນມູນຄ່າຂອງລາຄາວັດສະດຸກໍ່ສ້າງຕາມທ້ອງຕະຫຼາດ ໃນໄລຍະການລົງເກັບກຳຂໍ້ມູນໃນເດືອນມັງກອນ ຫາ ກຸມພາ 2023, ພ້ອມດຽວກັນນັ້ນກໍໄດ້ພິຈາລະນາເອົາເງື່ອນໄຂຂອງສະພາບອັດຕາເງິນເຟີ້ເຂົ້າຕື່ມອີກ.

**3. ຫຼັກການຄິດໄລ່ລາຄາທົດແທນພືນລະປູກ**

ການຄິດໄລ່ລາຄາທົດແທນພືນລະປູກ ແມ່ນການປະເມີນມູນຄ່າຈາກ ພະແນກກະສິກຳ ແລະ ປ່າໄມ້ນະຄອນຫຼວງວຽງຈັນ, ພ້ອມດຽວກັນນັ້ນກໍໄດ້ພິຈາລະນາ ເອົາເງື່ອນໄຂຂອງສະພາບອັດຕາເງິນເຟີ້ເຂົ້າຕື່ມອີກ.

### ມາດຕາ 14 ລາຄາທົດແທນ

ລາຄາທົດແທນ ແມ່ນກຳນົດມູນຄ່າຕໍ່ກັບຊັບສິນທີ່ໄດ້ຮັບຜົນກະທົບຈາກໂຄງການ ມີລາຄາທົດແທນຂອງປະເພດ ທີ່ດິນ, ສິ່ງປູກສ້າງ ແລະ ພືນລະປູກ ມີລາຍລະອຽດດັ່ງໃນຕາຕະລາງ ລຸ່ມນີ້:

ຕາຕະລາງ 1: ລາຄາທົດແທນຊັບສິນ ປະເພດທີ່ດິນ

| ການກຳນົດລາຄາທົດແທນທີ່ດິນ | | |
|---|---|---|
| **ເມືອງໄຊທານີ ປະກອບມີ:** | | **ທົດແທນກີບ/ຕາແມັດ** |
| 1 | ບ້ານ ໂຄກສີວິໄລ | 999,009 |
| 2 | ບ້ານ ໂນນທອງ | 543,376 |
| 3 | ບ້ານ ໄຜ່ລ້ອມ | 438,985 |
| 4 | ບ້ານ ສີມສະຫວັນ | 640,907 |
| 5 | ບ້ານ ໂຄກສະຫວ່າງ | 568,728 |
| 6 | ບ້ານ ໂພນສະຫວັນ | 445,021 |
| 7 | ບ້ານ ນາຜາສຸກ | 459,934 |
| 8 | ບ້ານ ດົງຄວາຍ | 447,390 |
| 9 | ບ້ານ ບໍ່ເຫຼັກ | 474,847 |
| **ເມືອງປາກງື່ມ ປະກອບມີ:** | | **ທົດແທນກີບ/ຕາແມັດ** |
| 1 | ບ້ານ ໜອງບືອທອງ | 359,008 |
| 2 | ບ້ານ ສ້າງໃສ | 416,073 |

| | | |
|---|---|---|
| 3 | ບ້ານ ໂດກສາ | 401,659 |
| 4 | ບ້ານ ທາງໂຄ້ງ | 389,132 |
| 5 | ບ້ານ ດອນໄຊ່ | 359,008 |
| 6 | ບ້ານ ນາຊອນ | 262,968 |
| 7 | ບ້ານ ພ້າວ | 243,695 |
| 8 | ບ້ານ ສີມປະເສີດ | 241,607 |
| 9 | ບ້ານ ໄຊ່ | 225,203 |
| 10 | ບ້ານ ສີມສະຫວາດ | 255,029 |

ຕາຕະລາງ 2: ລາຄາຫົວໜ່ວຍທົດແທນຊັບສິນ ປະເພດສິ່ງປຸກສ້າງ

| ລຳດັບ | ເນື້ອໃນລາຍການ | ຫົວໜ່ວຍ | ລາຄາ(ກີບ) | | |
|---|---|---|---|---|---|
| **I** | **ການກຳນົດລາຄາຫົວໜ່ວຍປະເພດສິ່ງປຸກສ້າງ** | | | | |
| **ກ** | **ເຮືອນສອງຊັ້ນ ປະເພດ 01** | | **ລາຄາຕ່ຳ** | **ລາຄາກາງ** | **ລາຄາສູງ** |
| 1 | ເຮືອນ, ລຸ່ມກໍ່ດິນຈີ່, ເທິງໄມ້, ມຸງສັງກະສີ ຫຼື ອາລູຊິງ | $ມ^2$ | 6,978,365 | 7,580,046 | 8,181,727 |
| 2 | ເຮືອນ, ລຸ່ມກໍ່ດິນບ໊ອກ, ເທິງໄມ້, ມຸງສັງກະສີ ຫຼື ອາລູຊິງ | $ມ^2$ | 3,435,500 | 3,738,719 | 4,041,938 |
| **ຂ** | **ເຮືອນຊັ້ນດຽວ ປະເພດ 02** | $ມ^2$ | **ລາຄາຕ່ຳ** | **ລາຄາກາງ** | **ລາຄາສູງ** |
| 3 | ໂຄງສ້າງໄມ້, ຝາແປ້ນ, ມຸງສັງກະສີ | $ມ^2$ | 1,330,563 | 1,633,782 | 1,937,001 |
| 4 | ໂຄງສ້າງໄມ້, ຝາແປ້ນ, ມຸງອາລູຊີງ | $ມ^2$ | 1,350,563 | 1,653,782 | 1,957,001 |
| 5 | ໂຄງສ້າງໄມ້, ຝາກໍ່ດິນຈີ່, ມຸງສັງກະສີ | $ມ^2$ | 2,569,966 | 2,873,185 | 3,176,404 |
| 6 | ໂຄງສ້າງໄມ້, ຝາກໍ່ດິນຈີ່, ມຸງກະເບື້ອງ | $ມ^2$ | 2,611,466 | 2,914,685 | 3,217,904 |
| 7 | ໂຄງສ້າງເບຕົງ, ຝາກໍ່ດິນບອັກ, ມຸງສັງກະສີ | $ມ^2$ | 2,713,734 | 3,016,953 | 3,320,172 |
| 8 | ໂຄງສ້າງເບຕົງ, ຝາກໍ່ດິນບອັກ, ມຸງກະເບື້ອງ | $ມ^2$ | 2,876,214 | 3,179,433 | 3,482,652 |
| 9 | ໂຄງສ້າງເບຕົງ, ຝາກໍ່ດິນຈີ່, ມຸງສັງກະສີ | $ມ^2$ | 2,834,714 | 3,137,933 | 3,441,152 |
| 10 | ໂຄງສ້າງເບຕົງ, ຝາກໍ່ດິນຈີ່, ມຸງກະເບື້ອງ | $ມ^2$ | 2,976,328 | 3,279,547 | 3,582,766 |
| **ຄ** | **ເຮືອນຕູບ ປະເພດ 03** | | **ລາຄາຕ່ຳ** | **ລາຄາກາງ** | **ລາຄາສູງ** |
| 11 | ໂຄງສ້າງໄມ້, ພື້ນເບຕົງ, ຝາໄມ້ປ່ອງ, ມຸງຫຍ້າ ຫຼື ມຸງຜ້າ | $ມ^2$ | 55,000 | 92,500 | 130,000 |
| 12 | ໂຄງສ້າງໄມ້, ພື້ນເບຕົງ, ຝາໄມ້ປ່ອງ, ມຸງສັງກະສີ | $ມ^2$ | 105,000 | 130,000 | 155,000 |
| **ງ** | **ຮ້ານອາຫານ, ເຮືອນຄົວ, ເພີງເຮືອນ, ກາລາແປງລົດ, ຕູບ** | | **ລາຄາຕ່ຳ** | **ລາຄາກາງ** | **ລາຄາສູງ** |
| 13 | ເຮັດດ້ວຍໂຄງໄມ້ກົມ ຫຼື ໄມ້ແປຮູບ, ເທພື້ນເບຕົງ, ມຸງສັງກະສີ ຫຼື ອາລູຊີງ (ຖ້າມີປະຕູມ້ວນ ຫຼື ແກ້ວ ໃຫ້ເອົາລາຄາສູງ) | $ມ^2$ | 521,313 | 896,313 | 1,271,313 |
| 14 | ເຮັດດ້ວຍໂຄງໄມ້ກົມ ຫຼື ໄມ້ແປຮູບ, ເທພື້ນເບຕົງ, ມຸງກະເບື້ອງ (ຖ້າມີປະຕູມ້ວນ ຫຼື ແກ້ວ ໃຫ້ເອົາລາຄາສູງ) | $ມ^2$ | 538,688 | 913,688 | 1,288,688 |
| 15 | ເຮັດດ້ວຍໂຄງເຫຼັກ, ເທພື້ນເບຕົງ, ມຸງສັງກະສີ ຫຼື ອາລູຊີງ (ຖ້າມີປະຕູມ້ວນ ຫຼື ແກ້ວ ໃຫ້ເອົາລາຄາສູງ) | $ມ^2$ | 541,313 | 916,313 | 1,291,313 |
| 16 | ເຮັດດ້ວຍໂຄງເຫຼັກ, ເທພື້ນເບຕົງ, ມຸງກະເບື້ອງ (ຖ້າມີປະຕູມ້ວນ ຫຼື ແກ້ວ ໃຫ້ເອົາລາຄາສູງ) | $ມ^2$ | 582,188 | 957,188 | 1,332,188 |
| 17 | ເຮັດດ້ວຍໂຄງເບຕົງ, ເທພື້ນເບຕົງ, ມຸງສັງກະສີ ຫຼື ອາລູຊີງ (ຖ້າມີປະຕູມ້ວນ ຫຼື ແກ້ວ ໃຫ້ເອົາລາຄາສູງ) | $ມ^2$ | 602,188 | 977,188 | 1,352,188 |
| 18 | ເຮັດດ້ວຍໂຄງເບຕົງ, ເທພື້ນເບຕົງ, ມຸງກະເບື້ອງ (ຖ້າມີປະຕູ | $ມ^2$ | 635,188 | 1,010,188 | 1,385,188 |

| ລຳດັບ | ເນື້ອໃນລາຍການ | ຫົວໜ່ວຍ | ລາຄາ(ກີບ) | | |
|---|---|---|---|---|---|
| | ມ້ວນ ຫຼື ແກ້ວ ໃຫ້ເອົາລາຄາສູງ) | | | | |
| **ຈ** | **ປະເພດຮົ້ວ** | | **ລາຄາຕ່ຳ** | **ລາຄາກາງ** | **ລາຄາສູງ** |
| 19 | ກຳແພງກໍ່ດ້ວຍດິນຈີ່ | ມຍ | 384,000 | 464,000 | 544,000 |
| 20 | ກຳແພງກໍ່ດ້ວຍດິນບ໋ອກ | ມຍ | 325,000 | 405,000 | 485,000 |
| 21 | ຮົ້ວເສົາເບຕົງ ກັບ ຕາໜ່າງໝາກກອກ | ມຍ | 120,000 | 132,500 | 145,000 |
| 22 | ຮົ້ວເສົາເບຕົງ ກັບ ໜາມໝາກຈັບ (ໜາມໝາກຈັບ 5 ຮາວ) | ມຍ | 97,000 | 109,500 | 122,000 |
| 23 | ຮົ້ວເສົາເຫຼັກ ກັບ ຕາໜ່າງໝາກກອກ | ມຍ | 155,000 | 192,500 | 230,000 |
| 24 | ຮົ້ວເສົາເຫຼັກ ກັບ ໜາມໝາກຈັບ (ໜາມໝາກຈັບ 5 ຮາວ) | ມຍ | 132,000 | 169,500 | 207,000 |
| 25 | ຮົ້ວເສົາໄມ້ ກັບ ຕາໜ່າງໝາກກອກ | ມຍ | 85,000 | 100,000 | 115,000 |
| 26 | ຮົ້ວເສົາໄມ້ ກັບ ໜາມໝາກຈັບ (ໜາມໝາກຈັບ 5 ຮາວ) | ມຍ | 62,000 | 77,000 | 92,000 |
| 27 | ເສົາປູນ | ເສົາ | 60,000 | 75,000 | 85,000 |
| 28 | ເສົາເຫຼັກ | ເສົາ | 95,000 | 120,000 | 170,000 |
| 29 | ຫຼັກຮົ້ວໄມ້ແກ່ນຫຼ້ອນ | ເສົາ | 25,000 | 35,000 | 55,000 |
| 30 | ໜາມໝາກຈັບ | ໂກ້ງ | 170,000 | 200,000 | 220,000 |
| 31 | ຕາໜ່າງໝາກກອກ 1*1.8ມ | ມຍ | 20,000 | 21,500 | 23,000 |
| 32 | ກະແຕະໄມ້ປ່ອງ | ອັນ | 25,000 | 30,000 | 35,000 |
| **ສ** | **ປະເພດນ້ຳໃຊ້** | | **ລາຄາຕ່ຳ** | **ລາຄາກາງ** | **ລາຄາສູງ** |
| 33 | ນ້ຳສ້າງ | ມຍ | 221,000 | 241,000 | 261,000 |
| 34 | ນ້ຳບາດານ | ຕໍ່ໜ່ວຍ | 3,500,000 | 4,500,000 | 5,500,000 |
| **ຊ** | **ປະເພດທາດ, ສານພະພູມ ແລະ ຄ່າພິທີກຳຕ່າງໆ** | | **ລາຄາຕ່ຳ** | **ລາຄາກາງ** | **ລາຄາສູງ** |
| 35 | ຄ່າພິທີການຍ້າຍສານພະພູມ | ຄັ້ງ | 500,000 | 750,000 | 1,000,000 |

**ໝາຍເຫດ:**

1. ກໍລະນີ ສິ່ງປະກອບຫາກບໍ່ຄົບຫຼາຍເກີນໄປໃຫ້ແຍກຊິ້ນສ່ວນອາຄານເພື່ອຄິດໄລ່ລະອຽດແຕ່ລະສ່ວນ ໂດຍອີງໃສ່ ລາຄາຫົວໜ່ວຍການກໍ່ສ້າງເຄຫາສະຖານ ຂອງກະຊວງໂຍທາທິການ ແລະ ຂົນສົ່ງ ສະບັບເລກທີ 26123/ຍທຂ.ນອ , ລົງວັນທີ 17 ທັນວາ 2021.
2. ກໍລະນີ ພົບເຫັນ ລາຍການຊັບສິນ ທີ່ນອກເໜືອ ຈາກທີ່ໄດ້ກຳນົດໄວ້ໃນຕາຕະລາງນີ້ ແມ່ນໃຫ້ຄິດໄລ່ຕາມຄວາມເປັນຈິງ ສະເໜີໃຫ້ຄະນະກຳມະການໄກ່ເກ່ຍພິຈາລະນາ.
3. ກໍລະນີມີພິທີກຳອື່ນໆ ເຊັ່ນ: ການຍ້າຍເຮືອນ (ເຜົ່າໄຕດຳ) ໃຫ້ພິຈາລະນາຕາມຄວາມເໝາະສົມ ແລະ ບໍ່ເກີນ 1,000,000 ກີບ.

ຕາຕະລາງ 3: ລາຄາຫົວໜ່ວຍທົດແທນຊັບສິນ ປະເພດພືດລະປູກ

| ລ/ດ | ລາຍການ | ອາຍຸ (ປີ) | ຫົວໜ່ວຍ | ລາຄາ (ກີບ) |
|---|---|---|---|---|
| **I** | ຕົ້ນໄມ້ອຸດສາຫະກຳ | | | |
| 1 | ໄມ້ດູ່ລາຍ, ຕົ້ນໄມ້ດູ່, ໄມ້ແຕ້ຄ່າ, ໄມ້ຂະຍຸງ, ໄມ້ຄຳພີ້, ໄມ້ສັກ ແລະ ຕົ້ນໄມ້ເກດສະໜາ | 1-5 | ຕົ້ນ | 450,000 |
| | | 6-10 | ຕົ້ນ | 900,000 |
| | | > 10 | ຕົ້ນ | 1,500,000 |
| 2 | ຕົ້ນໄມ້ອີກ | 1-5 | ຕົ້ນ | 90,000 |

| ລ/ດ | ລາຍການ | ອາຍຸ (ປີ) | ຫົວໜ່ວຍ | ລາຄາ (ກີບ) |
|---|---|---|---|---|
| | | 6-10 | ຕົ້ນ | 210,000 |
| | | > 10 | ຕົ້ນ | 300,000 |
| 3 | ຕົ້ນຢາງພາລາ | 1-3 | ຕົ້ນ | 270,000 |
| | | 4-10 | ຕົ້ນ | 300,000 |
| | | > 10 | ຕົ້ນ | 360,000 |
| **II** | **ຕົ້ນໄມ້ໃຫ້ໝາກ** | | | |
| 1 | ໝາກມີ້, ມ່ວງ, ອາໂວກາໂດ້, ສີດາ, ລຳໄຍ, ລະມຸດ, ໝາກເງາະ, ລີ້ນຈີ່, ຖົ່ວລຽນ, ມັງກອນ, ໝາກຂຽບ | 1-3 | ຕົ້ນ | 150,000 |
| | | 4-6 | ຕົ້ນ | 600,000 |
| | | > 6 | ຕົ້ນ | 1,500,000 |
| 2 | ໝາກກະທັນ, ກ້ຽງໃຫຍ່, ກ້ຽງນ້ອຍ, ໝາກຕ້ອງ, ໝາກຂາມ, ໝາກນາວ | 1-3 | ຕົ້ນ | 150,000 |
| | | 4-6 | ຕົ້ນ | 450,000 |
| | | > 6 | ຕົ້ນ | 900,000 |
| 3 | ຕົ້ນໝາກພ້າວ | 1-5 | ຕົ້ນ | 210,000 |
| | | 6-10 | ຕົ້ນ | 600,000 |
| | | > 10 | ຕົ້ນ | 1,500,000 |
| 4 | ໝາກນ້ຳນົມ, ມ່ວງຫິມະພານ, ໝາກຍົມ, ໝາກເຟືອງ, ໝາກຈອງ, ໝາກຂີ້ຫູດ | 1-3 | ຕົ້ນ | 90,000 |
| | | 4-6 | ຕົ້ນ | 300,000 |
| | | > 6 | ຕົ້ນ | 600,000 |
| 5 | ໝາກງິ້ວ, ມອນໄຂ່, ພິລາ, ໝາກຄາຍ, ໝາກຈອງ, ໝາກແງວ, ໝາກແຄ່ນ, ໝາກຄໍ້, ໝາກຫຼອດ, ໝາກເກັນ, ໝາກລິ່ນໄມ້, ໝາກຕູມ/ໝາກໄຟ, ໝາກຂາມປ້ອມ, ໝາກກອກ | 1-5 | ຕົ້ນ | 60,000 |
| | | 6-10 | ຕົ້ນ | 150,000 |
| | | > 10 | ຕົ້ນ | 450,000 |
| 6 | ໝາກອິນທະຜາລຳ | 1-3 | ຕົ້ນ | 600,000 |
| | | 4-6 | ຕົ້ນ | 1,200,000 |
| | | > 6 | ຕົ້ນ | 1,800,000 |
| **III** | **ໜອງປາ, ນາເຂົ້າ, ພືດສວນ ແລະ ພືດອາຫານສັດ** | | | |
| 1 | ໜອງປາ | | ແມັດກ້ອນ | 45,000 |
| 2 | ນາເຂົ້າ | 1 ລະດູ | ຮຕ | 36,000,000 |
| 3 | ນາເຂົ້າ | 2 ລະດູ | ຮຕ | 72,000,000 |
| 4 | ຕົ້ນກ້ວຍ (ໃຫ້ຜົນຜະລິດແລ້ວ) | | ສຸມ | 600,000 |
| 5 | ຕົ້ນກ້ວຍ (ຍັງບໍ່ໃຫ້ຜົນຜະລິດແລ້ວ) | | ສຸມ | 150,000 |
| 6 | ຕົ້ນໝາກຮຸ່ງ (ໃຫ້ໝາກແລ້ວ) | | ຕົ້ນ | 300,000 |
| 7 | ຕົ້ນໝາກຮຸ່ງ (ຍັງບໍ່ທັນໃຫ້ໝາກແລ້ວ) | | ຕົ້ນ | 150,000 |
| 8 | ຕົ້ນໝາກນັດ (ໃຫ້ໝາກແລ້ວ) | | ສຸມ | 30,000 |
| 9 | ຕົ້ນໝາກນັດ (ຍັງບໍ່ທັນໃຫ້ໝາກ) | | ສຸມ | 15,000 |
| 10 | ອ້ອຍ | | ສຸມ | 150,000 |
| 11 | ຂ່າ, ຂີງ | | ສຸມ | 60,000 |
| 12 | ຫົວສີໄຄ | | ສຸມ | 30,000 |
| 13 | ມັນຕົ້ນ | 1-3 ເດືອນ | ຕາແມັດ | 1,875 |

| ລ/ດ | ລາຍການ | ອາຍຸ (ປີ) | ຫົວໜ່ວຍ | ລາຄາ (ກີບ) |
|---|---|---|---|---|
| | | 4-6 ເດືອນ | ຕາແມັດ | 3,750 |
| | | > 6 ເດືອນ | ຕາແມັດ | 5,625 |
| 14 | ຫວາຍ/ໜໍ່ແຍ້ | | ສຸມ | 150,000 |
| 15 | ດອກແຄ, ກະຖິນ, ຜັກຂະ, ຜັກຫວານ, ຂີ້ເຫລັກ, ຂີ້ມກະເດົາ, ສະເມັກ, ມອນ | 1-2 | ຕົ້ນ | 150,000 |
| | | > 3 | ຕົ້ນ | 300,000 |
| 16 | ຕົ້ນກາເຟ | 1-2 | ຕົ້ນ | 150,000 |
| | | > 3 | ຕົ້ນ | 450,000 |
| 17 | ຫຍ້າແນວພັນສູງ (ຫຍ້າກີນີ, ເນເປຍ) | | ຕາແມັດ | 15,000 |
| 18 | ຫຍ້າແນວພັນຕໍ່າ (ຫຍ້າລູຊີ) | | ຕາແມັດ | 7,500 |
| **IV** | **ປະເພດໄມ້ປ່ອງ** | | | |
| 1 | ໄຜ່ບ້ານ, ຊາງໄພ, ຊາງຄຳ, ໄຜ່ລ້ຽງນ້ອງ | < 1 | ສຸມ | 150,000 |
| | | 2 | ສຸມ | 300,000 |
| | | 3 | ສຸມ | 450,000 |
| | | 4 | ສຸມ | 900,000 |
| | | 5 | ສຸມ | 1,200,000 |
| | | > 6 | ສຸມ | 1,500,000 |

**ມາດຕາ 15 ວິທີການຄິດໄລ່ມູນຄ່າທົດແທນໃນໄລຍະທີ່ໄດ້ຮັບຜົນກະທົບ**

ວິທີການຄິດໄລ່ມູນຄ່າທົດແທນໃນໄລຍະທີ່ໄດ້ຮັບຜົນກະທົບ ແມ່ນມູນຄ່າທົດແທນຕໍ່ຊັບສິນທີ່ໄດ້ຮັບຜົນກະທົບແຕ່ລະປະເພດ ໂດຍເອົາຫົວໜ່ວຍຊັບສິນທີ່ໄດ້ຮັບຜົນກະທົບ ຄູນກັບ ລາຄາຫົວໜ່ວຍທີ່ໄດ້ກຳນົດໄວ້ໃນມາດຕາ 14 ຂ້າງເທິງນັ້ນ, ຜົນຄູນດັ່ງກ່າວ ຈະອອກເປັນມູນຄ່າຕົວເລກເງິນ. ມູນຄ່າທົດແທນຈະອອກມາຫຼາຍ ຫຼື ໜ້ອຍນັ້ນ ແມ່ນຂຶ້ນກັບປະລິມານຂອງຊັບສິນ ແລະ ອັດຕາລາຄາຫົວໜ່ວຍທົດແທນ ຊຶ່ງມີວິທີການຄິດໄລ່ດັ່ງນີ້:

**1. ການຄິດໄລ່ມູນຄ່າທົດແທນຊັບສິນປະເພດເນື້ອທີ່ດິນ**

**ມູນຄ່າທົດແທນ(ກີບ) = [ ປະເພດເນື້ອທີ່ດິນ (ມ$^2$) x ລາຄາຫົວໜ່ວຍທົດແທນ (ກີບ/ມ$^2$) ]**

**2. ການຄິດໄລ່ມູນຄ່າທົດແທນຊັບສິນປະເພດປຸກສ້າງ**

**ມູນຄ່າທົດແທນ (ກີບ) = [ ປະເພດສິ່ງປຸກສ້າງ (ມ$^2$) x ລາຄາຫົວໜ່ວຍທົດແທນ (ກີບ/ມ$^2$) ]**

**3. ການຄິດໄລ່ມູນຄ່າທົດແທນຊັບສິນປະເພດຕົ້ນໄມ້ກິນໝາກ ແລະ ຕົ້ນໄມ້ອຸດສະຫະກຳ**

**ລວມມູນຄ່າທົດແທນ (ກີບ) = [ ປະເພດຕົ້ນໄມ້ (ຕົ້ນ) x ລາຄາຫົວໜ່ວຍທົດແທນ (ກີບ/ໜ່ວຍ) ]**

**4. ການຄິດໄລ່ມູນຄ່າທົດແທນຄ່າເສຍໂອກາດຂອງຮ້ານຄ້າ/ຮ້ານບໍລິການ**

ການຄິດໄລ່ມູນຄ່າທົດແທນຄ່າເສຍໂອກາດຂອງຮ້ານຄ້າ/ຮ້ານບໍລິການ ຈະເອົາມູນຄ່າການມອບຈ່າຍອາກອນປະຈຳປີ ມາສະເລ່ຍທີ່ເປັນລາຍເດືອນ ອອກມາເປັນຄ່າສະເລ່ຍເປັນວັນ ໄລຍະທີ່ເສຍໂອກາດການສ້າງລາຍໄດ້ມາ

ເປັນພື້ນຖານ ແລ້ວມາຄູນກັບຈຳນວນວັນເວລາທີ່ປິດຮ້ານຕົວຈິງ ໃນການຄິດໄລ່ການທົດແທນຄ່າເສຍໂອກາດ ລາຍໄດ້ໃນຊ່ວງໄລຍະທີ່ບໍ່ສາມາດດຳເນີນທຸລະກິດໄດ້ດັ່ງນີ້:

**ການທົດແທນຄ່າເສຍໂອກາດຂອງຮ້ານຄ້າ/ຮ້ານບໍລິການ (ກີບ) = ຄ່າສະເລ່ຍເປັນວັນ (ມູນຄ່າ ການມອບຈ່າຍອາກອນປະຈຳປີ/12 ເດືອນ/30 ວັນ) X ໄລຍະເວລາປິດຮ້ານຕົວຈິງ (ຢັ້ງຢືນຈາກອຳນາດການປົກຄອງບ້ານ)**

ການຈັດລະດັບປະເພດສິ່ງປຸກສ້າງທີ່ຮັບຜົນກະທົບ ເຊັ່ນ: ເຮືອນ, ເຮືອນຄົວ, ເທີບເຮືອນ ແລະ ຮ້ານຄ້າ ວ່າຈະນອນຢູ່ໃນລະດັບໃດ (ຕ່ຳ, ກາງ, ສູງ) ແມ່ນຂຶ້ນກັບການປະເມີນຕີລາຄາຕາມຕົວຈິງ ຂອງຄະນະກຳມະການແກ້ໄຂສິ່ງກີດຂວາງ ແລະ ຄົ້ນຄວ້າຮ່າງນິຕິກຳນະໂຍບາຍ ແລະ ປະເມີນລາຄາຫຼືໜ່ວຍທົດແທນຜົນກະທົບຕາມແລວທາງ ໂຄງການປັບປຸງ ແລະ ສ້ອມແປງທາງເລກທີ 13 ໃຕ້ (ກມ 21 ຫາ ກມ 66) ຊ່ວງນະຄອນຫຼວງວຽງຈັນ ຮ່ວມກັບເຈົ້າຂອງສິ່ງປຸກສ້າງທີ່ໄດ້ຮັບຜົນກະທົບ ໂດຍການນຳໃຊ້ແບບຟອມປະເມີນສະເພາະ (ເອກະສານຄັດຕິດ 1).

## ໝວດທີ 4
## ຂໍ້ຫ້າມ

### ມາດຕາ 16 ຂໍ້ຫ້າມທົ່ວໄປ

ຫ້າມບຸກຄົນ, ນິຕິບຸກຄົນ ຫຼື ອົງການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ປົກປິດ, ຊຸກເຊື່ອງ, ບໍ່ຈິງໃຈແຈ້ງຂໍ້ມູນ ແລະ ປອມແປງເອກະສານ;
2. ໃຊ້ຄວາມຮຸນແຮງ, ນາບຂູ່, ຂັດຂວາງ ການປະຕິບັດໜ້າທີ່ຂອງພະນັກງານ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;
3. ປຸກລະດົມ, ຂົນຂວາຍ, ໂຄສະນາໃສ່ຮ້າຍປ້າຍສີໃນທຸກຮູບແບບ;
4. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

### ມາດຕາ 17 ຂໍ້ຫ້າມ ສຳລັບພະນັກງານ

ຫ້າມພະນັກງານ ມີພຶດຕິກຳ ດັ່ງນີ້:

1. ເປີດເຜີຍຄວາມລັບ, ກົດໜ່ວງຖ່ວງດຶງ, ປົກປິດ, ຊຸກເຊື່ອງ ຂໍ້ມູນ ແລະ ປອມແປງເອກະສານກ່ຽວກັບຂໍ້ມູນໂຄງການ;
2. ສວຍໃຊ້ໜ້າທີ່ ຕຳແໜ່ງ, ຮັບສິນບົນ ເພື່ອປະໂຫຍດຂອງຕົນ, ຄອບຄົວ, ຍາດພີ່ນ້ອງ ຊຶ່ງກໍ່ຄວາມເສຍຫາຍໃຫ້ແກ່ຜົນປະໂຫຍດ ຂອງລັດ, ລວມໝູ່ ແລະ ປະຊາຊົນ;
3. ໃຊ້ສິດ ແລະ ໜ້າທີ່ເກີນຂອບເຂດ ຫຼື ບໍ່ມີຄວາມຮັບຜິດຊອບຕໍ່ໜ້າທີ່;
4. ໃຊ້ຄວາມຮຸນແຮງ, ບັງຄັບ, ນາບຂູ່;
5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

## ໝວດທີ 5
## ການແກ້ໄຂຂໍ້ຂັດແຍ່ງ

### ມາດຕາ 18 ການແກ້ໄຂຂໍ້ຂັດແຍ່ງ

ການແກ້ໄຂຂໍ້ຂັດແຍ່ງດຳເນີນດ້ວຍຮູບການໃດໜຶ່ງ ດັ່ງນີ້:

1. ການແກ້ໄຂດ້ວຍການປະນີປະນອມ;
2. ການແກ້ໄຂທາງດ້ານບໍລິຫານ;
3. ການແກ້ໄຂຕາມຂະບວນການຍຸຕິທຳ.

ມາດຕາ 19 ການແກ້ໄຂດ້ວຍການປະນີປະນອມ

ໃນກໍລະນີເກີດຂໍ້ຂັດແຍ່ງ ຄູ່ກໍລະນີສາມາດປຶກສາຫາລື ເຈລະຈາ ຫຼື ປະນີປະນອມໂດຍສັນຕິວິທີ, ປະນີປະນອມ ຫຼື ໂດຍຜ່ານຄົນກາງ ເພື່ອໃຫ້ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດທີ່ສົມເຫດສົມຜົນ ແລະ ເປັນທຳ.

ມາດຕາ 20 ການແກ້ໄຂທາງດ້ານບໍລິຫານ

ໃນກໍລະນີ ມີຂໍ້ຂັດແຍ່ງກ່ຽວກັບການທົດແທນຄ່າເສຍຫາຍ ບໍ່ຮ້າຍແຮງ ໃຫ້ຄູ່ກໍລະນີ ສະເໜີຕໍ່ອົງການທີ່ຄຸ້ມຄອງພິຈາລະນາແກ້ໄຂຕາມລະບຽບການ.

ມາດຕາ 21 ການແກ້ໄຂຕາມຂະບວນການຍຸຕິທຳ

ໃນກໍລະນີ ເກີດຂໍ້ຂັດແຍ່ງທີ່ບໍ່ສາມາດແກ້ໄຂໄດ້ ຝ່າຍໃດຝ່າຍໜຶ່ງ ສາມາດຮ້ອງຟ້ອງຕໍ່ສານ ເພື່ອພິຈາລະນາຕັດສິນຕາມກົດໝາຍ.

## ໝວດທີ 6
## ອົງການຄຸ້ມຄອງ

ມາດຕາ 22 ອົງການຄຸ້ມຄອງວຽກງານທົດແທນ

ອົງການປົກຄອງນະຄອນຫຼວງວຽງຈັນ ມີໜ້າທີ່ຄຸ້ມຄອງນະໂຍບາຍ ແລະ ລາຄາຫົວໜ່ວຍທົດແທນຢ່າງລວມສູນຢ່າງເປັນເອກະພາບ ໂດຍມອບໃຫ້ຄະນະຮັບຜິດຊອບຊີ້ນຳຂັ້ນນະຄອນຫຼວງວຽງຈັນ, ຄະນະກຳມະການແກ້ໄຂຂໍ້ຂັດແຍ່ງ, ຫ້ອງການຈັດຕັ້ງປະຕິບັດງານຂັ້ນນະຄອນຫຼວງວຽງຈັນ, ອົງການປົກຄອງເມືອງ, ອົງການປົກຄອງບ້ານ ເປັນຜູ້ຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນສຳເລັດ ຊຶ່ງປະກອບມີພາກສ່ວນຕ່າງໆດັ່ງນີ້:

1. ຄະນະຊີ້ນຳໂຄງການ ແລະ ຫ້ອງການປະສານງານຂັ້ນສູນກາງ;
2. ຄະນະກຳມະການແກ້ໄຂຂໍ້ຂັດແຍ່ງ;
3. ຫ້ອງການຈັດຕັ້ງປະຕິບັດງານຂັ້ນນະຄອນຫຼວງວຽງຈັນ;
4. ອົງການປົກຄອງເມືອງ ແລະ ບ້ານ;

**ມາດຕາ 23 ສິດ ແລະ ໜ້າທີ່ ຄະນະຊີ້ນຳໂຄງການ ແລະ ຫ້ອງການປະສານງານຂັ້ນສູນກາງ**

ສິດ ແລະ ໜ້າທີ່ ຂອງຄະນະຊີ້ນຳໂຄງການ ແລະ ຫ້ອງການປະສານງານຂັ້ນສູນກາງ ມີດັ່ງນີ້:

1. ປະສານສົມທົບກັບຜູ້ໃຫ້ທຶນ, ເຜີຍແຜ່ນະໂຍບາຍ ແລະ ລະບຽບຂອງຜູ້ໃຫ້ທຶນ ໂດຍຜ່ານທີ່ປຶກສາຂອງໂຄງການ ຫຼື ໂດຍກົງຈາກຄະນະກຳມະການທີ່ກ່ຽວຂ້ອງ;
2. ຊີ້ນຳ, ນຳພາ, ສຶກສາຜົນກະທົບ, ດຳເນີນການຊົດເຊີຍ ແລະ ກວດກາຄວາມຖືກຕ້ອງສອດຄ່ອງ ໃນການວາງແຜນຄຸ້ມຄອງ ແລະ ຈັດຕັ້ງປະຕິບັດໂຄງການຕາມແຜນແມ່ບົດທີ່ຜ່ານການຮັບຮອງລະຫວ່າງຜູ້ໃຫ້ທຶນກັບ ລັດຖະບານແຫ່ງ ສປປ ລາວ;
3. ປະສານສົມທົບກັບໜ່ວຍງານຂັ້ນນະຄອນຫຼວງວຽງຈັນ ແລະ ຄະນະທີ່ປຶກສາຂອງໂຄງການ ເພື່ອຈັດຕັ້ງປະຕິບັດວຽກງານໃຫ້ສະດວກ;
4. ຮັບຮອງເອົານິຕິກຳ, ອອກຂໍ້ຕົກລົງ ຫຼື ແຈ້ງການຕ່າງໆ ທີ່ກ່ຽວຂ້ອງ ເພື່ອຈັດຕັ້ງປະຕິບັດວຽກງານທົດແທນຄ່າເສຍຫາຍໃນເຂດໂຄງການ;
5. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມການມອບໝາຍຂອງຂັ້ນເທິງ.

**ມາດຕາ 24 ສິດ ແລະ ໜ້າທີ່ ຂອງຄະນະກຳມະການແກ້ໄຂຂໍ້ຂັດແຍ່ງຍົກຍ້າຍສິ່ງກີດຂວາງ**

ສິດ ແລະ ໜ້າທີ່ ຂອງຄະນະກຳມະການແກ້ໄຂຂໍ້ຂັດແຍ່ງຍົກຍ້າຍສິ່ງກີດຂວາງ ມີດັ່ງນີ້:

1. ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ເຂົ້າຮ່ວມການປຶກສາຫາລືວຽກງານທົດແທນຄ່າເສຍຫາຍຈາກໂຄງການ;
2. ຕິດຕາມ, ກວດສອບ ການຈັດຕັ້ງປະຕິບັດວຽກງານທົດແທນ;
3. ເຂົ້າຮ່ວມການປຶກສາຫາລືດ້ານນະໂຍບາຍ, ລາຄາຫົວໜ່ວຍທົດແທນ ແລະ ຂໍ້ກໍານົດອື່ນທີ່ກ່ຽວຂ້ອງກັບການຈັດຕັ້ງປະຕິບັດວຽກງານທົດແທນ;
4. ເຜີຍແຜ່ຂໍ້ມູນຂ່າວສານໃຫ້ຜູ້ໄດ້ຮັບຜົນກະທົບໃນເຂດໂຄງການໃຫ້ທົ່ວເຖິງ, ເຂົ້າຮ່ວມການເກັບກໍາຂໍ້ມູນຜູ້ ມີຄໍາເຫັນ ຫຼື ຂໍ້ສະເໜີໃນການຈັດຕັ້ງປະຕິບັດໂຄງການ;
5. ເຜີຍແຜ່ນະໂຍບາຍ ແລະ ສິດທິ ໃຫ້ຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການໄດ້ຮັບຊາບຕໍ່ແນວທາງການພັດທະນາຂອງໂຄງການ, ຊຸກຍູ້ ແລະ ລະດົມແນວຄິດຂອງຜູ້ໄດ້ຮັບຜົນກະທົບໃຫ້ເຂົ້າໃຈຕໍ່ແນວທາງການພັດທະນາໂຄງການ ໃຫ້ໄດ້ຮັບໝາກຜົນ;
6. ເຂົ້າຮ່ວມຂະບວນການທົດແທນກັບຜູ້ໄດ້ຮັບຜົນກະທົບຈາກໂຄງການ ໂດຍເລີ່ມຈາກການເກັບກໍາຂໍ້ມູນຊັບສິນ, ສໍາຫຼວດເສດຖະກິດຄົວເຮືອນ, ເຮັດຂໍ້ຕົກລົງທົດແທນ ແລະ ຈ່າຍເງິນທົດແທນໃຫ້ຄອບຄົວທີ່ໄດ້ຮັບຜົນກະທົບຈາກໂຄງການ;
7. ເຂົ້າຮ່ວມໃນການປຶກສາຫາລື ເພື່ອໄກ່ເກ່ຍ ແລະ ແກ້ໄຂຂໍ້ຂັດແຍ້ງ ທີ່ເກີດຂຶ້ນໃນໄລຍະເວລາຈັດຕັ້ງປະຕິບັດວຽກງານຈັດສັນຍົກຍ້າຍ ແລະ ຊົດເຊີຍ;
8. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມການມອບໝາຍຂອງຂັ້ນເທິງ.

**ມາດຕາ 25 ສິດ ແລະ ໜ້າທີ່ ຂອງຫ້ອງການປະຕິບັດງານຂັ້ນນະຄອນຫຼວງວຽງຈັນ**

ສິດ ແລະ ໜ້າທີ່ ຂອງຫ້ອງການປະຕິບັດງານຂັ້ນນະຄອນຫຼວງວຽງຈັນ ມີດັ່ງນີ້:

1. ເປັນເສນາທິການໃຫ້ຄະນະຊີ້ນໍາຂັ້ນນະຄອນຫຼວງວຽງຈັນ ແລະ ຫ້ອງການປະສານງານຂັ້ນສູນກາງ ລາຍງານຜົນການຈັດຕັ້ງປະຕິບັດວຽກງານທົດແທນໃນເຂດໂຄງການທີ່ໄດ້ຮັບຜົນກະທົບ;
2. ວາງແຜນການເຄື່ອນໄຫວວຽກງານ, ຂຶ້ນແຜນດ້ານງົບປະມານ ທັງວຽກບໍລິຫານ ແລະ ວຽກງານການທົດແທນໃນທຸກຂົງເຂດຜົນກະທົບຂອງໂຄງການ;
3. ປະສານສົມທົບກັບທຸກຂະແໜງການທີ່ກ່ຽວຂ້ອງ ເພື່ອເຄື່ອນໄຫວວຽກງານທົດແທນຄ່າເສຍຫາຍທີ່ເກີດຂຶ້ນຈາກໂຄງການ;
4. ເຜີຍແຜ່ຂໍ້ມູນຂ່າວສານ, ລະບຽບຫຼັກການ ທີ່ກ່ຽວຂ້ອງຂອງໂຄງການໃຫ້ພາກສ່ວນທີ່ກ່ຽວຂ້ອງໄດ້ເຂົ້າໃຈຢ່າງທົ່ວເຖິງ ກ່ຽວກັບແນວທາງການຈັດຕັ້ງປະຕິບັດ ແລະ ໃຫ້ຄວາມຮ່ວມມືໃນການເຄື່ອນໄຫວວຽກງານ, ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
5. ເຂົ້າຮ່ວມຂະບວນການທົດແທນ ກັບຜູ້ໄດ້ຮັບຜົນກະທົບຈາກໂຄງການ ໂດຍເລີ່ມຈາກການເກັບກໍາຂໍ້ມູນຊັບສິນ, ສໍາຫຼວດເສດຖະກິດຄົວເຮືອນ, ເຮັດຂໍ້ຕົກລົງທົດແທນ ແລະ ຈ່າຍເງິນທົດແທນໃຫ້ຄອບຄົວທີ່ໄດ້ຮັບຜົນກະທົບຈາກໂຄງການ;
6. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມການມອບໝາຍຂອງຂັ້ນເທິງ.

**ມາດຕາ 26 ສິດ ແລະ ໜ້າທີ່ຂອງຫ້ອງການປະຕິບັດງານຂັ້ນເມືອງ**

ສິດ ແລະ ໜ້າທີ່ ຂອງຫ້ອງການປະຕິບັດງານຂັ້ນເມືອງ ມີດັ່ງນີ້:

1. ເປັນເສນາທິການໃຫ້ຄະນະຊີ້ນໍາຂັ້ນເມືອງ ລາຍງານຜົນການຈັດຕັ້ງປະຕິບັດວຽກງານທົດແທນໃນເຂດໂຄງການທີ່ໄດ້ຮັບຜົນກະທົບ;
2. ວາງແຜນການເຄື່ອນໄຫວວຽກງານ, ຂຶ້ນແຜນດ້ານງົບປະມານ ທັງວຽກບໍລິຫານ ແລະ ວຽກງານການທົດແທນໃນທຸກຂົງເຂດເມືອງຜົນກະທົບຂອງໂຄງການ;

3. ປະສານສົມທົບກັບທຸກຂະແໜງການທີ່ກ່ຽວຂ້ອງ ເພື່ອເຄື່ອນໄຫວວຽກງານທົດແທນຄ່າເສຍຫາຍທີ່ເກີດຂຶ້ນຈາກໂຄງການ;
4. ເຜີຍແຜ່ຂໍ້ມູນຂ່າວສານ, ລະບຽບຫຼັກການ ທີ່ກ່ຽວຂ້ອງຂອງໂຄງການໃຫ້ພາກສ່ວນທີ່ກ່ຽວຂ້ອງໄດ້ເຂົ້າໃຈຢ່າງທົ່ວເຖິງ ກ່ຽວກັບແນວທາງການຈັດຕັ້ງປະຕິບັດ ແລະ ໃຫ້ຄວາມຮ່ວມມືໃນການເຄື່ອນໄຫວວຽກງານ, ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
5. ເຂົ້າຮ່ວມຂະບວນການທົດແທນ ກັບຜູ້ໄດ້ຮັບຜົນກະທົບຈາກໂຄງການ ໂດຍເລີ່ມຈາກການເກັບກຳຂໍ້ມູນຊັບສິນ, ສຳຫຼວດເສດຖະກິດຄົວເຮືອນ, ເຮັດຂໍ້ຕົກລົງທົດແທນ ແລະ ຈ່າຍເງິນທົດແທນໃຫ້ຄອບຄົວທີ່ໄດ້ຮັບຜົນກະທົບຈາກໂຄງການ;
6. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມການມອບໝາຍຂອງຂັ້ນເທິງ.

**ມາດຕາ 27 ສິດ ແລະ ໜ້າທີ່ຂອງອົງການປົກຄອງບ້ານ**

ສິດ ແລະ ໜ້າທີ່ ຂອງອົງການປົກຄອງບ້ານ ມີດັ່ງນີ້:

1. ສຶກສາອົບຮົມ ແລະ ເຜີຍແຜ່ຂໍ້ມູນຂ່າວສານໃຫ້ປະຊາຊົນຮັບຮູ້, ເຂົ້າໃຈກ່ຽວກັບແຜນພັດທະນາໂຄງການໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
2. ໃຫ້ຄວາມຮ່ວມມື ແລະ ເຂົ້າຮ່ວມກິດຈະກຳຂອງໂຄງການ ໃນຂອບເຂດທີ່ຕົນຮັບຜິດຊອບ;
3. ເປັນເຈົ້າການເຂົ້າຮ່ວມຂະບວນແກ້ໄຂຂໍ້ຂັດແຍ່ງຄຳຮ້ອງທຸກ ທີ່ເກີດຂຶ້ນຈາກຜູ້ໄດ້ຮັບຜົນກະທົບຈາກໂຄງການ, ສັງລວມບັນຫາທີ່ເກີດຂຶ້ນ ແລະ ແຈ້ງໃຫ້ໜ່ວຍງານທີ່ກ່ຽວຂ້ອງໄດ້ຮັບຊາບຕາມຂັ້ນຕອນ;
4. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມການມອບໝາຍຂອງຂັ້ນເທິງ.

## ໝວດທີ 7
## ອົງການກວດກາ

**ມາດຕາ 28 ອົງການກວດກາ**

ອົງການກວດການະໂຍບາຍ ແລະ ລາຄາຫົວໜ່ວຍທົດແທນຄ່າເສຍຫາຍຕໍ່ຊັບສິນທີ່ໄດ້ຮັບຜົນກະທົບຈາກໂຄງການປັບປຸງ ແລະ ສ້ອມແປງທາງຫຼວງແຫ່ງຊາດເລກທີ 13 ໃຕ້ ມີດັ່ງນີ້:

1. ອົງການກວດກາພາຍໃນປະກອບມີ:
   - ຄະນະຊີ້ນຳໂຄງການ;
   - ຄະນະກຳມະການແກ້ໄຂຂໍ້ຂັດແຍ່ງ;
   - ຫ້ອງການປະຕິບັດງານຂັ້ນນະຄອນຫຼວງວຽງຈັນ;
   - ອົງການປົກຄອງຂັ້ນເມືອງ;
   - ອົງການປົກຄອງບ້ານ.
2. ອົງການກວດກາພາຍນອກປະກອບມີ:
   - ສະພາປະຊາຊົນ ນະຄອນຫຼວງວຽງຈັນ;
   - ອົງການກວດກາລັດ ນະຄອນຫຼວງວຽງຈັນ;
   - ອົງການແນວລາວສ້າງຊາດ ນະຄອນຫຼວງວຽງຈັນ;
   - ສະຫະພັນນັກຮົບເກົ່າ ນະຄອນຫຼວງວຽງຈັນ;
   - ອົງການຈັດຕັ້ງມະຫາຊົນ;
   - ປະຊາຊົນບັນດາເຜົ່າ;
   - ສື່ມວນຊົນ.

ມາດຕາ 29 ເນື້ອໃນການກວດກາ

ເນື້ອໃນການກວດກາ ມີດັ່ງນີ້:

1. ກວດກາການຈັດຕັ້ງປະຕິບັດວຽກງານການທົດແທນຄ່າເສຍຫາຍຜົນກະທົບ ຈາກໂຄງການປັບປຸງ ແລະ ສ້ອມແປງທາງຫຼວງແຫ່ງຊາດເລກທີ 13 ໃຕ້ ຕາມຂໍ້ຕົກລົງສະບັບນີ້ໄດ້ກຳນົດ;
2. ກວດກາເນື້ອໃນຄຳຮ້ອງທຸກ ແລະ ຂໍ້ມູນຂອງຜູ້ທີ່ໄດ້ຮັບຜົນກະທົບ ໃຫ້ໄດ້ຮັບການແກ້ໄຂສອດຄ່ອງ, ຖືກຕ້ອງ, ໂປ່ງໃສ ແລະ ເປັນທຳ ຕາມຂໍ້ຕົກລົງສະບັບນີ້ໄດ້ກຳນົດ;

ມາດຕາ 30 ຮູບການກວດກາ

1. ກວດກາປົກກະຕິ ແມ່ນການກວດກາດຳເນີນໄປຕາມແຜນການ, ແຜນງານ ແລະ ໜ້າວຽກທີ່ໄດ້ກຳນົດໄວ້ໃນເວລາອັນແນ່ນອນ;
2. ການກວດກາໂດຍມີການແຈ້ງການລ່ວງໜ້າ ແມ່ນການກວດການອກແຜນ ເມື່ອເຫັນວ່າມີຄວາມຈຳເປັນ ຫຼື ຄຳສະເໜີຂອງຜູ້ໄດ້ຮັບຜົນກະທົບ ໂດຍໄດ້ແຈ້ງໃຫ້ຜູ້ຖືກກວດກາຮັບຊາບລ່ວງໜ້າ;
3. ການກວດກາແບບກະທັນຫັນ ແມ່ນການກວດການອກແຜນ ທີ່ມີຄວາມຈຳເປັນຮີບດ່ວນ ໂດຍບໍ່ມີການແຈ້ງໃຫ້ຜູ້ຖືກກວດກາໄດ້ຮັບຮູ້ລ່ວງໜ້າ.

## ໝວດທີ 8
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

ມາດຕາ 31 ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານອັນດີເດັ່ນ ໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ແມ່ນຈະໄດ້ຮັບການຍ້ອງຍໍຊົມເຊີຍຕາມລະບຽບການຂອງລັດ.

ມາດຕາ 32 ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະໄດ້ຮັບການສຶກສາອົບຮົມ, ກ່າວເຕືອນ, ປະຕິບັດວິໄນ, ປັບໃໝ, ໃຊ້ແທນ ທາງແພ່ງ ຫຼື ລົງໂທດທາງອາຍາ ຕາມກົດໝາຍທີ່ໄດ້ກຳນົດໄວ້.

ມາດຕາ 33 ມາດຕະການສຶກສາອົບຮົມ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດຂໍ້ຕົກລົງສະບັບນີ້ ມີລັກສະນະແບບເບົາບາງ ຊຶ່ງບໍ່ເປັນການກະ ທຳທາງອາຍາ ແລະ ກໍ່ຄວາມເສຍຫາຍຕໍ່າກວ່າຫ້າແສນກີບລົງມາ ຈະຕ້ອງໄດ້ຖືກຕັກເຕືອນ ແລະ ສຶກສາອົບຮົມ, ກໍລະນີທີ່ມີການກະທຳຜິດອາຈິນ ແລະ ມີຜົນເສຍຫາຍເກີນຫ້າແສນກີບຂຶ້ນໄປ ຈະຖືກດຳເນີນຄະດີຕາມກົດໝາຍ.

ມາດຕາ 34 ມາດຕະການທາງວິໄນ

ພະນັກງານ ຫຼື ເຈົ້າໜ້າທີ່ ທີ່ໄດ້ລະເມີດຂໍ້ຕົກລົງສະບັບນີ້ ທີ່ມີລັກສະນະເບົາບາງ ຊຶ່ງບໍ່ເປັນການກະທຳຄວາມຜິດທາງອາຍາຈະຖືກຕັກເຕືອນ, ກ່າວເຕືອນຄວາມຜິດ ຫຼື ກໍລະນີບໍ່ຈິງໃຈລາຍງານ, ລົບຫຼີກຈາກຄວາມຜິດຂອງຕົນຈະຖືກໂຈະການເລື່ອນຊັ້ນຂັ້ນເງິນເດືອນ, ການຍ້ອງຍໍ ຫຼື ປົດຕຳແໜ່ງ ຍົກຍ້າຍໄປຮັບຕຳແໜ່ງໃໝ່ທີ່ຕໍ່າກ່ວາເກົ່າ ຫຼື ໃຫ້ອອກຈາກລັດຖະກອນ ແລະ ຜູ້ທີ່ຖືກປະຕິບັດວິໄນ ຕ້ອງສົ່ງຊັບສິນຂອງຕົນ ທີ່ໄດ້ມາໂດຍບໍ່ຖືກຕ້ອງຄືນໃຫ້ການຈັດຕັ້ງຢ່າງຄົບຖ້ວນ.

**ມາດຕາ 35 ມາດຕະການທາງແພ່ງ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ລວມເຖິງເຈົ້າໜ້າທີ່ຂອງລັດ ທີ່ໄດ້ລະເມີດຂໍ້ຕົກລົງສະບັບນີ້ ຊຶ່ງກໍ່ໃຫ້ເກີດຄວາມເສຍຫາຍແກ່ສິດ ແລະ ຜົນປະໂຫຍດຂອງປະຊາຊົນຜູ້ໄດ້ຮັບຜົນກະທົບຈາກໂຄງການ ຕ້ອງໄດ້ຮັບຜິດຊອບທາງແພ່ງ.

**ມາດຕາ 36 ມາດຕະການທາງອາຍາ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ໄດ້ລະເມີດຂໍ້ຕົກລົງສະບັບນີ້ ຊຶ່ງກໍ່ໃຫ້ເກີດຄວາມເສຍຫາຍຢ່າງຫຼວງຫຼາຍ ໃຫ້ແກ່ສິດ, ຜົນປະໂຫຍດຂອງລັດ, ລວມໝູ່ ແລະ ປະຊາຊົນຜູ້ໄດ້ຮັບຜົນກະທົບ ຈາກໂຄງການ ຈະຖືກດຳເນີນຄະດີຕາມປະມວນກົດໝາຍອາຍາ.

## ໝວດທີ 9
## ບົດບັນຍັດສຸດທ້າຍ

**ມາດຕາ 37 ການຈັດຕັ້ງປະຕິບັດ**

ມອບໃຫ້ກຳມະການທົດແທນ ແລະ ຍົກຍ້າຍສິ່ງກີດຂວາງ, ຫ້ອງການປະຕິບັດງານຂັ້ນນະຄອນຫຼວງວຽງຈັນ, ອົງການປົກຄອງເມືອງ, ອົງການປົກຄອງບ້ານ ແລະ ຜູ້ທີ່ໄດ້ຮັບຜົນກະທົບເປັນເຈົ້າການ ໃນການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ໃຫ້ໄດ້ຜົນດີ.

**ມາດຕາ 38 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ແລະ ບັງຄັບໃຊ້ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ເຊັນແທນ **ເຈົ້າຄອງນະຄອນຫຼວງວຽງຈັນ**

ສິລິລາດທົງສິນ ທອງເພັງ

ບ່ອນສົ່ງ:
- ເຈົ້າຄອງ-ຮອງເຈົ້າຄອງນະຄອນຫຼວງວຽງຈັນ ທ່ານລະ 1 ສະບັບ;
- ກົມຂົວທາງ ກະຊວງໂຍທາທິການ ແລະ ຂົນສົ່ງ 1 ສະບັບ;
- ພະແນກໂຍທາທິການ ແລະ ຂົນສົ່ງນວ. 1 ສະບັບ;
- ສະຖາບັນໂຍທາທິການ ແລະ ຂົນສົ່ງ 1 ສະບັບ;
- ເມືອງໄຊທານີ ນະຄອນຫຼວງວຽງຈັນ 1 ສະບັບ;
- ເມືອງປາກງື່ມ ນະຄອນຫຼວງວຽງຈັນ 1 ສະບັບ;
- ພະແນກການທີ່ກ່ຽວຂ້ອງ ພະແນກລະ 1 ສະບັບ;
- ອົງການປົກຄອງບ້ານທີ່ກ່ຽວຂ້ອງ ບ້ານລະ 1 ສະບັບ;
- ຄະນະຊີ້ນຳໂຄງການ ແລະ ຄະນະກຳມະການ ໄກ່ເກ່ຍສິ່ງກີດຂວາງໂຄງການ ທ່ານລະ 1 ສະບັບ;
- ເກັບມ້ຽນສຳເນົາ 2 ສະບັບ.